ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ
Lao Culture Tourism Public Group Company

ເລກທີ 056 /ບທວລ
ນະຄອນຫຼວງວຽງຈັນ, ວັນທີ 31 MAR 2026

ຮຽນ : ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື;
ທ່ານ ຜູ້ອຳນວຍການໃຫ່ຍ ຕະຫຼາດຫຼັກຊັບລາວ ທີ່ນັບຖື;
ທ່ານ ຜູ້ຖືຮຸ້ນ ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ທີ່ນັບຖື,

ເລື່ອງ : ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສາມັນສະພາບໍລິຫານ ຄັ້ງທີ 1 ປີ 2026

- ອີງຕາມຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ (ສະບັບປັບປຸງ) ຂອງ ສຄຄຊ ສະບັບ ເລກທີ 04/ສສຄ ລົງວັນທີ 28 ມັງກອນ ປີ 2019.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊລ, ລົງ ວັນທີ 27 ກັນຍາ 2018.

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ (ບທວລ) ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນ ຂອງ ກອງປະຊຸມສາມັນສະພາບໍລິຫານ ຄັ້ງທີ 1 ປີ 2026 ເຊິ່ງຈັດຂຶ້ນໃນວັນທີ 31 ມີນາ 2026 ເວລາ 8:30 ໂມງ, ຢູ່ ສຳນັກງານກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້ :

1. ກຳນົດເອົາວັນທີ 17 ເມສາ 2026 ເປັນມື້ປິດປຶ້ມທະບຽນຜູ້ຖືຮຸ້ນ ເພື່ອຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2025 ໃນວັນທີ 4 ພຶດສະພາ 2026, ເວລາ 9:30 ໂມງ, ສະຖານທີ່ຫ້ອງປະຊຸມຊັ້ນ 4 : ບໍລິສັດ ລັດວິສາຫະກິດ ພັດທະນາກະສິກຳ-ອຸດສາຫະກຳ ບໍລິການ ແລະການຄ້າ ຂາອອກ - ຂາເຂົ້າ (ພກອ)
2. ຮັບຮອງວາລະກອງປະຊຸມສາມັນຜູ້ຖືຮຸ້ນຂອງ ບທວລ ປະຈຳປີ 2025 :
   1) ພິຈາລະນາ ແລະ ຮັບຮອງ ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024
   2) ພິຈາລະນາ ແລະ ຮັບຮອງ ບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 1 ປີ 2025
   3) ພິຈາລະນາ ແລະ ຮັບຮອງ ບົດລາຍງານການດຳເນີນທຸລະກິດ ປະຈຳປີ 2025
   4) ພິຈາລະນາ ແລະ ຮັບຮອງ ເອກະສານລາຍງານການເງິນ ປະຈຳປີ 2025
   5) ພິຈາລະນາ ແລະ ຮັບຮອງການສ້າງຕັ້ງບໍລິສັດບໍລິຫານແບຣນກາເຟ ຈີແອວຊີ ຈຳກັດ
   6) ພິຈາລະນາ ແລະ ຮັບຮອງ ສັນຍາຮັບເໝົາໂຄງການກໍ່ສ້າງພະພຸດທະຮູບພູຜາບ໋ວ
   7) ພິຈາລະນາແລະ ຮັບຮອງ ການປ່ຽນຊື່ຂອງບໍລິສັດ ບໍລິການວາງສະແດງສາກົນລາວ ຈຳກັດຜູ້ດຽວ
   8) ພິຈາລະນາ ແລະ ຮັບຮອງ ການປ່ຽນຂາຮຸ້ນຂອງບໍລິສັດ ຟາສະຕາ ໂຕແບກໂຄ ການຄ້າ ຈຳກັດ
   9) ພິຈາລະນາແລະ ຮັບຮອງ ການເພີ່ມທຶນຈົດທະບຽນ ແລະ ຂາຮຸ້ນຂອງບໍລິສັດສະຖາບັນແຜນການ ແລະການອອກແບບທ່ອງທ່ຽວແຫ່ງຊາດລາວຈຳກັດຜູ້ດຽວ

ດັ່ງນັ້ນ, ຈຶ່ງຮຽນມາເພື່ອຊາບ ແລະໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືຢ່າງສູງ.

ປະທານສະພາບໍລິຫານບໍລິສັດ

ເນ້ຍເຫຼ້ຍ